**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 3087 /ກງ

ນະຄອນຫຼວງວຽງຈັນ, ວັນທີ 04 ຕຸລາ 2022

# ແຈ້ງການ

ເຖິງ: - ບັນດາ ທ່ານ ລັດຖະມົນຕີ ກະຊວງ ແລະ ຫົວໜ້າອົງການທຽບເທົ່າກະຊວງ ທີ່ນັບຖື;

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາ ເຈົ້າແຂວງ ທົ່ວປະເທດ;

ເລື່ອງ: ເພີ່ມທະວີການຄຸ້ມຄອງ ແລະ ນຳໃຊ້ ເວບໄຊການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ.

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນຂອງລັດ(ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 05 ກໍລະກົດ 2012;
- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ30/ສພຊ,ລົງວັນທີ 2 ພະຈິກ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 2403/ຄຊລ, ລົງວັນທີ 15 ສິງຫາ 2022.

ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ກະຊວງການເງິນໄດ້ສຳເລັດການພັດທະນາເວບໄຊການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຊຶ່ງໄດ້ເປີດນຳໃຊ້ ໃນຕົ້ນວັນທີ 21 ເມສາ 2022 ແຕ່ຍັງບໍ່ໄດ້ອອກແຈ້ງການໃຫ້ຈັດຕັ້ງປະຕິບັດເປັນທາງການ ສະນັ້ນ, ເພື່ອເຮັດໃຫ້ການຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວວຽກງານການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດໃຫ້ ຖືກຕ້ອງ, ສອດຄ່ອງ ແລະ ເປັນເອກະພາບກັນປະຕິບັດ ໃນຂອບເຂດທົ່ວປະເທດ, ຈຸດປະສົງ ແນໃສ່ຮັບປະກັນການນຳໃຊ້ທຶນຂອງລັດ ໃຫ້ມີປະສິດທິພາບ, ປະສິດທິຜົນສູງ, ປະຢັດ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້, ປະ ກອບ ສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ, ກະຊວງການເງິນ ຈຶ່ງແຈ້ງມາໃຫ້ບັນດາທ່ານ ຈັດຕັ້ງປະຕິບັດດັ່ງນີ້:

1. ເພີ່ມທະວີຄວາມເປັນເຈົ້າການ ໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ຢ່າງເຂັ້ມງວດ;

2. ນຳໃຊ້ເຄື່ອງມືທີ່ກ່ຽວຂ້ອງ ເຊັ່ນ: ເອກະສານປະມູນ, ເອກະສານການປະເມີນການປະມູນ ແລະ ເວບໄຊການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຢ່າງເຂັ້ມງວດ ແລະ ເຕັມຮູບແບບ;
3. ຂໍ້ມູນກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເຊັ່ນ: ແຜນການຈັດຊື້-ຈັດຈ້າງປະຈຳປີ ແລະ ໜັງສືປະກາດການປະມູນ ຕ້ອງເອົາລົງເວບໄຊ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ (ppmd.mof.gov.la) ກ່ອນດຳເນີນການປະມູນ ຕາມກົດໝາຍ ແລະລະບຽບການກຳນົດ;
4. ພາຍຫຼັງສຳເລັດການປະມູນ, ສະຖິຕິການມອບສັນຍາ, ຈຳນວນສັນຍາ ແລະ ບັນຊີຜູ້ສະໜອງ ແລະ ຜູ້ຮັບເໝົາ ຕ້ອງເອົາລົງເວບໄຊການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເພື່ອໃຫ້ຖືກຕ້ອງກັບ ກົດໝາຍ ແລະ ລະບຽບການກຳນົດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ກະຊວງການເງິນໄດ້ຝຶກອົບຮົມການນຳໃຊ້ຜ່ານມາແລ້ວ;
5. ຂໍ້ມູນອື່ນໆກ່ຽວກັບວຽກງານ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຕ້ອງເອົາລົງເວບໄຊທັງໝົດ, ທັ້ງນີ້ ກໍເພື່ອເປັນການເກັບກຳຂໍ້ມູນ ແລະ ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານຕ່າງໆໃຫ້ກວ້າງຂວາງ, ເພື່ອໃຫ້ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ; ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແລະ ຮັບປະກັນ ສິດ ແລະ ຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ລັດຖະມົນຕີ ກະຊວງ, ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາເຈົ້າແຂວງທົ່ວປະເທດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ລັດຖະມົນຕີ**

ບຸນປອນ ວັນນະຈິດ

**ສຳເນົາສົ່ງ:**

- ທ່ານ ຮອງ ລມຕ ກະຊວງການເງິນ 1 ສະບັບ;
- ຫ້ອງການກະຊວງ 1 ສະບັບ;
- ກົມຄຸ້ມຄອງຊັບສິນແຫ່ງລັດ 1 ສະບັບ;
- ພາກສ່ວນກ່ຽວຂ້ອງພາກສ່ວນລະ 1 ສະບັບ,
- ວິສາຫະກິດລັດລົງທຶນພາກສ່ວນ 1 ສະບັບ.